ບໍລິສັດ ສຸວັນນີ ໂຮມເຊັນເຕີ ໄດ້ຮັບໃບຍ້ອງຍໍທີ່ມີຜົນງານດີເດັ່ນ ປະເພດ I ໃນການປະກອບສ່ວນປະຕິບັດພັນທະໃຫ້ແກ່ລັດຖະບານ ຕະລອດໄລຍະ 5 ປີ (2020-2024)

ໃນວັນສຸກ, ວັນທີ 31 ຕຸລາ 2025 ທີ່ຜ່ານມາ, ຢູ່ທີ່ຫໍປະຊຸມແຫ່ງຊາດ- ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຜູ້ຈຳໜ່າຍສິນຄ້າວັດສະດຸກໍ່ສ້າງ ແລະ ເຄື່ອງຕົກແຕ່ງເຮືອນ ໄດ້ເຂົ້າຮ່ວມພິທີ “ມອບ-ຮັບ ໃບຍ້ອງຍໍວິສາຫະກິດທີ່ປະຕິບັດພັນທະດີເດັ່ນ 5 ປີ (ແຕ່ປີ 2020-2024)”.

ພິທີມອບ-ຮັບລາງວັນດັ່ງກ່າວແມ່ນເພື່ອສະຫຼຸບຜົນງານປະຈຳປີ 2024 ແລະ ໃຫ້ໃບຍ້ອງຍໍແກ່ 35 ບໍລິສັດ ທີ່ປະຕິບັດພັນທະດີເດັ່ນປະເພດ I ແລະ ເນື່ອງໃນໂອກາດ ພິທີສະເຫຼີມສະຫຼອງວັນສ້າງຕັ້ງຂະແໜງການເງິນ ຄົບຮອບ 75 ປີ (ວັນທີ 13 ສິງຫາ 1950 ຫາ ວັນທີ 13 ສິງຫາ 2025) ຂອງກະຊວງການເງິນ.

ເຊິ່ງຜ່ານການປະຕິບັດການມອບພາສີ-ອາກອນໃຫ້ແກ່ລັດຖະບານຢ່າງຕໍ່ເນື່ອງ ເຮັດໃຫ້ບໍລິສັດສາມາດຍາດໄດ້ ໃບຍ້ອງຍໍຜົນງານດີເດັ່ນ ປະເພດ I ໃນການປະກອບສ່ວນປະຕິບັດພັນທະໃຫ້ແກ່ລັດຖະບານ ຕະລອດໄລຍະ 5 ປີ (2020-2024) ມອບໂດຍ ທ່ານ ສັນຕິພາບ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ລັດຖະມົນຕີກະຊວງການເງິນ, ເຊິ່ງຕາງໜ້າ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຂຶ້ນຮັບລາງວັນໂດຍ ທ່ານ ພັນ ໂນລາ ສຸຄະບັນດິດ ຮອງຜູ້ອຳນວຍການໃຫຍ່ ແລະ ຜູ້ອຳນວຍການໃຫຍ່ຝ່າຍການເງິນ.



ເພື່ອເປັນສ່ວນໜຶ່ງຂອງການໃນການພັດທະນາປະເທດຊາດ. ນອກຈາກການມອບພັນທະອາກອນໂດຍກົງ ແກ່ພາກລັດແລ້ວ, ຄວບຄູ່ກັນນັ້ນບໍລິສັດຍັງໃຫ້ຄວາມສຳຄັນກັບການຕອບແທນສັງຄົມຜ່ານໂຄງການ “ສ້າງຮອຍ ຍິ້ມດ້ວຍການແບ່ງປັນ” ທີ່ດຳເນີນມາຕັ້ງແຕ່ປີ 2015 ເປັນໄລຍະເວລາເກືອບ 10 ປີ ເພາະພວກເຮົາເຊື່ອວ່າ: ການດຳເນີນທຸລະກິດທີ່ດີຕ້ອງຄຽງຄູ່ໄປກັບການສ້າງປະໂຫຍດໃຫ້ກັບສັງຄົມ, ສ້າງສັງຄົມແຫ່ງຈິດອາສາ ແລະ ການໃຫ້ ເປັນການພັດທະນາສັງຄົມ-ສິ່ງແວດລ້ອມ ແລະ ບັນດາບ້ານອ້ອມຂ້າງໃນດ້ານຕ່າງໆ ໃຫ້ດີຂຶ້ນແບບຍືນຍົງ.

ໃນການມອບມອບພາສີ-ອາກອນໃຫ້ແກ່ລັດຖະບານເປັນການປະກອບສ່ວນອັນສຳຄັນຂອງລູກຄ້າທຸກທ່ານ ທີ່ມາໃຊ້ບໍລິການຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ທຸກທ່ານຖືວ່າເປັນຜູ້ມີສ່ວນຮ່ວມຢ່າງໃຫຍ່ຫຼວງໃນການສະໜັບສະໜຸນການພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດບໍ່ວ່າຈະເປັນ ການລົງທຶນໃນການສ້າງພື້ນຖານໂຄງລ່າງ, ການພັດທະນາການສຶກສາ, ດ້ານສາທາລະນະສຸກ ແລະ ສະຫວັດດີການສັງຄົມ ເພື່ອຍົກລະດັບຄຸນນະພາບຊີວິດຂອງປະຊາຊົນໂດຍລວມ.



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ໃບຍ້ອງຍໍ

ເລກທີ 3895 /ກງ

ລັດຖະມົນຕີ ກະຊວງການເງິນ

ມອບໃບຍ້ອງຍໍໃຫ້ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ທີ່ມີຜົນງານດີເດັ່ນ ປະເພດ I ໃນການປະກອບສ່ວນປະຕິບັດພັນທະໃຫ້ແກ່ລັດຖະບານ ຕະຫຼອດໄລຍະ 5 ປີ (2020-2024)

ດັ່ງນັ້ນ, ຈຶ່ງໄດ້ມອບໃບຍ້ອງຍໍນີ້ ເພື່ອເປັນການສັນລະເສີນຜົນງານ ແລະ ຄຸນງາມຄວາມດີ.

ນະຄອນຫຼວງວຽງຈັນ, ວັນທີ 30 OCT 2025

ລັດຖະມົນຕີ

ສັນຕິພາບ ພົມວິຫານ